**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0056/ອຄ

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2023

# <u>ແຈ້ງການ</u>

**ເຖິງ:** ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ແຈ້ງປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ໜັງສືສະເໜີ ກ່ຽວກັບ ການປັບຫຼຸດອັດຕາອາກອນຊົມໃຊ້ຈາກນ້ຳມັນເຊື້ອໄຟ ສະບັບເລກທີ 3654/ຫກ, ລົງວັນທີ 14 ທັນວາ 2022;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງ ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 1,010 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 520 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 420 ກີບ/ລິດ.
   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 24,960 | 25,970 | 1,010 | 4,05 | |
| 2 | ອຊ ທຳມະດາ | 20,220 | 20,740 | 520 | 2,57 | |
| 3 | ກາຊວນ | 18,570 | 18,990 | 420 | 2,26 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 19 ມັງກອນ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0052/ກຄພນ, ລົງວັນທີ 18 ມັງກອນ 2023 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0024/ອຄ, ລົງວັນທີ 11 ມັງກອນ 2023.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຊັນແທນລັດຖະມົນຕີ
ຮອງລັດຖະມົນຕີ

ບຸນເຖິງ ດວງສະຫວັນ

<u>ບ່ອນສົ່ງ:</u>
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປໍ້ານໍ້າມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 19 ມັງກອນ 2023, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 25,970 | 20,740 | 18,990 |
| 2 | ແຂວງຜົ້ງສາລີ | 26,960 | 21,730 | 19,980 |
| 3 | ແຂວງຫຼວງນໍ້າທາ | 26,460 | 21,240 | 19,480 |
| 4 | ແຂວງອຸດົມໄຊ | 26,640 | 21,410 | 19,660 |
| 5 | ແຂວງບໍ່ແກ້ວ | 26,070 | 20,840 | 19,090 |
| 6 | ແຂວງຫຼວງພະບາງ | 26,470 | 21,250 | 19,500 |
| 7 | ແຂວງໄຊຍະບູລີ | 26,290 | 21,070 | 19,320 |
| 8 | ແຂວງຫົວພັນ | 26,470 | 21,250 | 19,500 |
| 9 | ແຂວງຊຽງຂວາງ | 26,160 | 20,930 | 19,180 |
| 10 | ແຂວງວຽງຈັນ | 25,970 | 20,740 | 18,990 |
| 11 | ແຂວງບໍລິຄຳໄຊ | 26,080 | 20,860 | 19,110 |
| 12 | ແຂວງຄຳມ່ວນ | 26,000 | 20,770 | 19,020 |
| 13 | ແຂວງສະຫວັນນະເຂດ | 26,000 | 20,770 | 19,020 |
| 14 | ແຂວງສາລະວັນ | 26,250 | 21,030 | 19,280 |
| 15 | ແຂວງຈຳປາສັກ | 26,030 | 20,800 | 19,050 |
| 16 | ແຂວງເຊກອງ | 26,250 | 21,030 | 19,280 |
| 17 | ແຂວງອັດຕະປື | 26,300 | 21,070 | 19,320 |
| 18 | ແຂວງໄຊສົມບູນ | 26,390 | 21,160 | 19,420 |

ນະຄອນຫຼວງວຽງຈັນ, ວັນທີ 18 ມັງກອນ 2023

**ຫົວໜ້າກົມ**

ພູວຽງ ພົງສາ